**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ມອບທຶນຊ່ວຍເຫຼືອຊື້ອຸປະກອນສ້ອມແປງໂຮງຮຽນ ແລະ ເຄື່ອງມືການແພດ ສຳເລັດແລ້ວ 6 ໂຄງການ ທົ່ວປະເທດ**

..................................................

ໂຄງການຊ່ວຍເຫຼືອສັງຄົມຂອງສາມອົງການຈັດຕັ້ງມະຫາຊົນ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຄົ້ນຄວ້າບັນດາໂຄງການຊ່ວຍເຫຼືອ ຢູ່ແຕ່ລະແຂວງ ໃນຂອບເຂດທົ່ວປະເທດ ເພື່ອເປັນການຊ່ວຍເຫຼືອສັງຄົມ ໂດຍສະເພາະແມ່ນການສ້ອມແປງປັບປຸງໂຮງຮຽນທີ່ເປ່ເພ, ຊື້ອຸປະກອນການຮຽນ-ການສອນ ແລະ ອຸປະກອນກິລາໃຫ້ແກ່ໂຮງຮຽນ, ພ້ອມທັງຊື້ອຸປະກອນການແພດໃຫ້ກັບສຸກສາລາ. ປະຈຸບັນ ທຄຕລ ໄດ້ສຳເລັດການຈັດຕັ້ງປະບັດ ມອບ-ຮັບທຶນຊ່ວຍເຫຼືອແລ້ວ 6 ໂຄງການ ປະກອບມີ:

1. ວັນທີ 21 ພຶດສະພາ 2020 ມອບ-ຮັບ ໂຄງການປັບປຸງກໍ່ສ້າງຫ້ອງຮຽນ ແລະ ອຸປະກອນການສຶກສາ ໃຫ້ໂຮງຮຽນປະຖົມສົມບູນຫາງດອຍ ເມືອງຜາອຸດົມ ແຂວງບໍ່ແກ້ວ ມູນຄ່າ 31.830.000 ກີບ;
2. ວັນທີ 12 ມິຖຸນາ 2020 ມອບ-ຮັບ ໂຄງການຊ່ວຍເຫຼືອດ້ານສຸຂະພາບຊື້ອຸປະກອນການແພດໃຫ້ ສຸກສາລາຖິ່ນອ່ອນ ເມືອງວັງວຽງ ແຂວງວຽງຈັນ ມູນຄ່າ 39.600.000 ກີບ;
3. ວັນທີ 01 ກໍລະກົດ 2020 ມອບ-ຮັບ ທຶນສ້ອມແປງຫ້ອງຮຽນ ໂຮງຮຽນປະຖົມສົມບູນໂພນສົມບູນ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ມູນຄ່າ 20.000.000 ກີບ;
4. ວັນທີ 01 ກໍລະກົດ 2020 ມອບ-ຮັບ ທຶນຊ່ວຍເຫຼືອຊື້ອຸປະກອນສ້ອມແປງ ໂຮງຮຽນປະຖົມສົມບູນໂນນສະຫວ່າງ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ມູນຄ່າ 14.000.000 ກີບ;
5. ວັນທີ 02 ກໍລະກົດ 2020 ມອບ-ຮັບ ປຶ້ມແບບຮຽນຊັ້ນມັດທະຍົມຕອນຕົ້ນໃຫ້ ໂຮງຮຽນ ມສ ເທດສະບານ ແຂວງຫຼວງນໍ້າທາ ມູນຄ່າ 18.000.000 ກີບ;
6. ວັນທີ 11 ກັນຍາ 2020 ມອບ-ຮັບ ໂຄງການສ້ອມແປງໂຮງຮຽນ ມສ ຜາເມືອງ ເມືອງບໍລິຄັນ ແຂວງບໍລິຄຳໄຊ ມູນຄ່າ 80.000.000 ກີບ

ລວມມູນຄ່າການຊ່ວຍເຫຼືອທັງໝົດ 6 ໂຄງການ ມີມູນຄ່າ 203.430.000 ກີບ

ຜົນສຳເລັດຂອງທັງ 6 ໂຄງການນີ້ ແມ່ນເປັນພຽງສ່ວນໜຶ່ງຂອງໂຄງການທັງໝົດ ທີ່ ທຄຕລ ໄດ້ມີຄວາມຕັ້ງໃຈໃຫ້ການຊ່ວຍເຫຼືອ ເພື່ອເປັນການປະກອບສ່ວນຊ່ວຍເຫຼືອສັງຄົມໃຫ້ເກີດປະໂຫຍດສູງທີ່ສຸດ ໃນຂອບເຂດທົ່ວປະເທດ.












……………………………………………………………

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນທັນສະໄໝ ວ່ອງໄວ ໝັ້ນໃຈ

👉ສອບຖາມຂໍ້ມູນເພີ່ມຕື່ມ:

☎️1555 ຫຼື OneCare Support

👉ແກ້ໄຂບັນຫາການໃຊ້ບໍລິການ:

☎️ໂທ/ຂໍ້ຄວາມ ຫາ ທີມງານ OneCare Support ຜ່ານ ແອັບ BCELOne

👉ຊ່ອງທາງຕິດຕາມຂໍ້ມູນຂ່າວສານ:

🌐www.bcel.com.la

🇫BCEL Bank, IG: BCEL Bank, Youtube: BCEL Channel